# San Diego Unified School District

EUGENE BRUCKER EDUCATION CENTER
4100 Normal Street, San Diego, CA 92103-2682

**William A. Kowba**
Interim Superintendent of Schools

ເດືອນກຸມພາ, **2008**

ເຖິງພໍ່ແມ່/ຜູ້ປົກຄອງນັກຮຽນທີ່ນັບຖື:

ເມື່ອວັນເສົາ, ວັນທີ **19**, ສະພາສຶກສາໄດ້ລົງຄະແນນສຽງເປັນສຽງດຽວກັນ ວ່າຈ້າງ **Dr. Terry Grier** ມາເປັນຫົວບໍຣິຫານສູນກາງສຶກສາ. ຂ້າພະເຈົ້າຈະໄດ້ເຮັດວຽກຮັກສາການແທນຊົ່ວຄາວໄປເຖິງສອງສາມເດືອນຂ້າງໜ້າ ໃນລະຍະທີ່ **Dr. Grier** ກະກຽມຍ້າຍເຂົ້າມາຈາກວຽກເກົ່າຂອງເພິ່ນ ຈາກຣັຖ ນອດຄາໂລໄລນາ ມາຫາ ແຊນດິເອໂກ (**North Carolina to San Diego**).

ລະຍະກຳກັບການແທນຊົ່ວຄາວນີ້, ຂ້າພະເຈົ້າປະກັນກັບທ່ານວ່າ ຈະບໍ່ມີສິ່ງໃດສຳຄັນເພີ້ມເຕີມນອກຈາກເຮັດໃຫ້ການສຶກສາມີຄຸນນະພາບດີຂຶ້ນແກ່ນັກຮຽນທຸກໆຄົນ. ຂ້າພະເຈົ້າມີຄວາມຍິນດີທີ່ສຸດທີ່ທ່ານໃຫ້ການຊ່ວຍເຫລືອໃນການຮ່ຳຮຽນຢູ່ທີ່ບ້ານ ແລະ ທຳໜ້າທີ່ໃຫ້ການປັບປຸງໂຮງຮຽນຂອງພວກເຮົາ.

ທຸກວັນ, ບັນດາພໍ່ແມ່ຂອງພວກເຮົາໄດ້ສ້າງການປ່ຽນແປງອັນດີແກ່ໂຮງຮຽນຂອງພວກເຮົາ. ເປົ້າໝາຍພວກເຮົາແມ່ນເພື່ອແນ່ໃຈໃຫ້ພໍ່ແມ່ມີຄວາມຮູ້ສຶກວ່າ ໂຮງຮຽນຍິນດີຕ້ອນຮັບເຂົ້າມາໂຮງຮຽນ. ນັບແຕ່ໂຄງການ **Family Friendly Schools** ໄດ້ເລີ້ມຂຶ້ນໃນປີຜ່ານມາ ພວກເຮົາໄດ້ເຫັນພໍ່ແມ່ ແລະ ນັກອາສາສມັກເຂົ້າມາໂຮງຮຽນຈຳນວນເພີ້ມຂຶ້ນມາກມາຍ, ມີຊົ່ວໂມງອາສາສມັກຈຳນວນຫລາຍກວ່າລ້ານຊົ່ວໂມງ. ໃນປີນີ້ ພວກຂ້າພະເຈົ້າຫວັງວ່າທ່ານຄົງຈະຊ່ອຍໃຫ້ໂຕເລກຫລາຍເພີ້ມຂຶ້ນ.

ຜ່ານມາຫົກເຈັດປີ, ສູນກາງສຶກສາແຊນດິເອໂກ ໄດ້ເຮັດສິ່ງສຳຄັນຫລາຍຢ່າງຂຶ້ນ. ພວກເຮົາໄດ້ກໍ່ສ້າງໂຮງຮຽນ ແລະ ໄດ້ປົວແປງໂຮງຮຽນຫລັງເກົ່າໃຫ້ໃຫມ່ຂຶ້ນຫລາຍໆແຫ່ງ. ພວກເຮົາໄດ້ປັບປຸງການຮຽນ ແລະ ໂຄງການຮຽນຕ່າງໆດີຂຶ້ນ. ພວກເຮົາໄດ້ສືບຕໍ່ຮັກສາກອງທຶນພື້ນຖານໄວ້ຢ່າງແໜ້ນແກ່ນ. ຜົນສຳເຣັດເຫລົ່ານີ້ແມ່ນຍ້ອນການເຮັດວຽກຢ່າງອົດທົນຂອງບັນດາຄຣູ, ຫົວໜ້າໝວດໂຮງຮຽນ, ບັນດາພໍ່ແມ່, ນັກຮຽນ ແລະ ບັນດາພະນັກງານສູນກາງສຶກສາທຸກຄົນ. ຂ້າພະເຈົ້າຫວັງວ່າຈະໄດ້ສ້າງຄວາມສຳເຣັດເຫລົ່ານີ້ຕໍ່ໄປ ເມື່ອພວກເຮົາເຮັດວຽກຮ່ວມກັນເພື່ອສ້າງໃຫ້ໂຮງຮຽນຂອງພວກເຮົາ ເປັນ ໂຮງຮຽນທີ່ດີເລີດຂອງອະເມຣິກາ.

ໃນເດືອນຕໍ່ໆໄປນີ້, ຂ້າພະເຈົ້າຈະໄດ້ຢ້ຽມຢາມໂຮງຮຽນຕ່າງໆທົ່ວເຂດຊຸມຊົນແຊນດິເອໂກ. ຂ້າພະເຈົ້າຫວັງຢ່າງຍິ່ງວ່າຈະໄດ້ພົບພໍ້ ແລະ ໂອ້ລົມກັບທ່ານກ່ຽວກັບການສຶກສາຮ່ຳຮຽນຂອງເດັກທ່ານ.

ດ້ວຍຄວາມນັບຖືຢ່າງສູງ,

**William A. Kowba**
**Interim Superintendent of Schools**